ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານແຫ່ງ ສປປ ລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ພົບປະສອງຝ່າຍເພື່ອແກ້ໄຂບັນຫາການຄຸ້ມຄອງເສດຖະກິດ




ໃນຕອນເຊົ້າຂອງວັນທີ 04 ເມສາ 2023 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມພົບປະລະຫວ່າງການນໍາຂອງ ທຫລ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ (ອຄ) ໂດຍການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ ແລະ ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງ ອຸດສາຫະກໍາ ແລະ ການຄ້າ ພ້ອມດ້ວຍຄະນະນໍາ, ຄະນະກົມຂອງທັງ 2 ຝ່າຍເຂົ້າຮ່ວມ ຢ່າງພ້ອມພຽງ.





ໃນກອງປະຊຸມໄດ້ຮັບຟັງລາຍງານສະພາບການປະຕິບັດແຜນເງິນຕາຂອງ ໄຕມາດທີ I ແລະ ທິດທາງແຜນການຂອງ ໄຕມາດທີ II ຈາກ ທຫລ ພ້ອມທັງປຶກສາຫາລືກ່ຽວກັບບັນຫາການຄຸ້ມຄອງລາຄາສິນຄ້າ; ບັນຫາການສ້າງລະບົບຄຸ້ມຄອງຫົວໜ່ວຍສົ່ງອອກ-ດັດສົມ ຫົວໜ່ວຍນຳເຂົ້າສິນຄ້າ; ບັນຫາການຄຸ້ມຄອງບັນດາຮ້ານຂາຍຄຳ-ວັດຖຸມີຄ່າ ທີ່ຕິດພັນກັບວຽກຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການຄຸ້ມຄອງອັດຕາແລກປ່ຽນ, ການແລກປ່ຽນເງິນຕາຊະຊາຍ ແລະ ການອະນຸຍາດໃຫ້ອອມຄຳ; ບັນຫາການຄຸ້ມຄອງການນຳໃຊ້ເງິນຕາແບບຊະຊາຍ-ການຕິດປະກາດລາຄາສິນຄ້າ ແລະ ບໍລິການ ເປັນເງິນຕາຕ່າງປະເທດຢູ່ສະຖານທີ່ຕ່າງໆ; ການຄຸ້ມຄອງການລົງທຶນໂດຍກົງຂອງຕ່າງປະເທດ (FDI - Foreign Direct Investment). ນອກຈາກນີ້, ຝ່າຍກະຊວງອຸດສາຫະກຳ ແລະ ການຄ້າ ຍັງໄດ້ລາຍງານສະພາບ ແລະ ແລກປ່ຽນຄຳຄິດເຫັນກ່ຽວກັບການຄຸ້ມຄອງການນຳເຂົ້າ-ສົ່ງອອກ ແລະ ຫັນເອົາເງິນຕາຕ່າງປະເທດທີ່ໄດ້ຈາກການສົ່ງອອກໃຫ້ເຂົ້າສູ່ລະບົບທະນາຄານ; ມາດຕະການການຈຳກັດການນຳເຂົ້າສິນຄ້າຟຸມເຟືອຍ; ການຄຸ້ມຄອງການຄ້າທາງເອເລັກໂຕຣນິກ (E-commerce) ແລະ ບັນຫາປີ່ນອ້ອມອື່ນໆ.

ກອງປະຊຸມໄດ້ມີການຕົກລົງເຫັນດີເພື່ອເຮັດວຽກຮ່ວມກັນໃນຕໍ່ໜ້າ ເປັນຕົ້ນແມ່ນ: ການຄຸ້ມຄອງລາຄາສິນຄ້າ; ການຄຸ້ມຄອງອັດຕາແລກປ່ຽນ; ອັດຕາເງິນເຟີ້; ການຄຸ້ມຄອງການຕິດ ແລະ ປະກາດລາຄາສິນຄ້າເປັນເງິນກີບ; ການຄຸ້ມຄອງການນຳໃຊ້ແອັບພິເຄຊັ້ນຂອງຮ້ານຂາຍຄຳ; ການແລກປ່ຽນຂໍ້ມູນລະຫວ່າງກັນ; ການປະຢັດການນຳໃຊ້ເງິນຕາຕ່າງປະເທດຂອງສັງຄົມ ແລະ ບັນຫາອື່ນໆທີ່ຕິດພັນ.

**# ພາບ: ສຸລິຍາ ໝື່ນວິເສດ, ສົມພິດ ທຳມະວົງ**

**# ຂ່າວ: ວັນປະເສີດ ສົມບຸນຂັນ.**